LAO GLOBAL HERITAGE ALLIANCE
ພັນທະມິດ ມໍຣະດົກ ລາວທົ່ວໂລກ
LGHA

ວັນທີ 7 ທັນວາ 2020

Venerable Bouakeo Sengsouriya
President of the Lao American Buddhist Council, Inc. in America
Wat Buddhabhavana
25 Milot Road
Westford, MA 01886

ນ້ອມນະມັສການ ຍ່າທ່ານ ບົວແກ້ວ ແສງສຸຣິຍາ, ປະທານບໍຣິຫານອົງການຄນະສົງຄ໌ລາວອາເມຣິກັນ ທີ່ເຄົາຣົບຢ່າງສູງ,

**ເຣື້ອງ: ແຈ້ງຖວາຍຣາຍງານກ່ຽວກັບຈົດໝາຍສົ່ນເທ້ສະບັບນຶ່ງທີ່ເຊັນໂດຍຍາທ່ານ**

ກ່ອນອື່ນ ພວກຂ້ານ້ອຍຫວັງວ່າ ຍາທ່ານ ຄົງມີສຸຂພາບແຂງແຮງແລະຄ່ອຍຢູ່ສຸກສະບາຍດີຕາມເດີມ.

ເມື່ອບໍ່ດົນຜ່ານມານີ້, ຂ້ານ້ອຍໄດ້ຮັບຂ່າວຈາກຄົນທີ່ຮູ້ຈັກກັນທີ່ຣັດ ຟລໍຣິດາ ຄື ທ່ານ Andrew (ບຸນມາ) ກໍມານີ. ຊຶ່ງເປັນອອກຕົນຍາດໂຍມຄໍ້າວັດລາວພຸທພະວັນນາຣາມ ທີ່ເມືອງ Kenneth City, FL. ຜູ້ກ່ຽວບອກຂ້ານ້ອຍວ່າ ພຣະອາຈານ ຄໍາພາ ເກດຕະວົງ, ເຈົ້າອາວາດວັດດັ່ງກ່າວໄດ້ຮັບຈົດໝາຍສະບັບນຶ່ງທີ່ເຊັນໂດຍ ຍາທ່ານເອງ ແຕ່ສົ່ງຈາກວັດລາວພຸທເມດຕາທີ່ເມືອງ Upper Marlboro, MD. ໃນຈົດໝາຍນັ້ນ ເວົ້າກ່ຽວກັບເຣື້ອງສິກພຣະຈັນດາພອນໂດຍປະຊາຄົມຊາວພຸດລາວໃນຂົງເຂດນະຄອນຫລວງວໍຊິງຕັນແລະຣັດອື່ນໆ ຮ່ວມກັບອົງການພັນທະມິດມໍຣະດົກລາວທົ່ວໂລກ-Lao Global Heritage Alliance (LGHA) ທີ່ຈັດຂຶ້ນໃນວັນທີ 19 ກັນຍາ 2020 ທີ່ຣັດເວຈີເນັຽ. ຈົດໝາຍສະບັບນີ້ ຂໍໃຫ້ແຈ້ງໃຫ້ທົ່ວເຖິງກັນວ່າ ພຣະ ຈັນດາພອນ ຈັກກາວາໂຣ ບໍ່ໄດ້ເປັນພຣະອີກຕໍ່ໄປແລ້ວ.

ຂ້ານ້ອຍ ກໍ່ໄດ້ແຈ້ງໃຫ້ໝູ່ຄນະຊາບນໍາ ເພາະເຫັນວ່າຈົດໝາຍສະບັບນີ້ ມີເງື່ອນງໍາ ບໍ່ແຈ້ງຂາວ ບໍ່ມີວັນທີ ບໍ່ມີກາຂອງອົງການຄນະສົງຄ໌ຕາມທີ່ຄວນ. ເມື່ອເປັນດັ່ງນີ້ ແມ່ອອກ ບຸນຈັນ ເສນທະວົງ ຜູ່ຊຶ່ງເປັນກັມມະການອຸປຖັມວັດລາວພຸທເມດຕາ ກໍໄດ້ໂທໄປປຶກສານໍາ ພຣະອາຈານ ທອງວັນ ດາລາວົງສ໌ ເພາະຊອງຈົດໝາຍຂຽນວ່າຈາກວັດລາວພຸທເມດຕາ. ແຕ່ເພິ່ນກໍບອກວ່າ ເພິ່ນບໍ່ຮູ້ຫຍັງກ່ຽວກັບບັນຫານີ້. ດັ່ງນັ້ນ ແມ່ອອກ ບຸນຈັນ ຈຶ່ງໄດ້ພະຍາຍາມໂທຫາ ຍາທ່ານອີກ ແຕ່ຍາທ່ານບໍ່ຮັບສາຍ ເລີຍໄດ້ປະຂໍ້ຄວາມໄວ້ເພື່ອຂໍຄວາມກະຣຸນາ ຍາທ່ານໂທຄືນ.

ເມື່ອບໍ່ເຫັນຍາທ່ານໂທກັບ, ພວກຂ້ານ້ອຍເລີຍລົງຄວາມເຫັນກັນວ່າ ຄວນຂຽນຈົດໝາຍແຈ້ງຖວາຍໃຫ້ເພິ່ນຊາບ

**4270 John Marr Drive, #1783, Annandale, VA 22003**
**www.LGHAlliance.org** ❖ Email: **info@LGHAlliance.org** ❖ Office: **(571) 261-6324**

ເຖິງເຫດການທີ່ເກີດຂຶ້ນນີ້. ຕິດຄັດມາພ້ອມນີ້ ມີ ຈົດໝາຍສະບັບດັ່ງກ່າວ ພ້ອມດ້ວຍຊອງເພື່ອຊາບ ແລະພິຈາຣະນາຂ້ານ້ອຍ.

ກາບຮຽນມາດ້ວຍຄວາມເຄົາຣົບຢ່າງສູງ,

ພໍ່ອອກ ສົມພອນ ໄຊຍະສິດເສນາ
ຄນະທີ່ປືກສາ
ອົງການພັນທະມິດນໍຣະດົກລາວທົ່ວໂລກ
571 334 3951